ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0217 /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 16 ກຸມພາ 2017

**ແຈ້ງການ**

**ເຖິງ:** ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ:** ກຳນົດໂຄງປະກອບລາຄາສິນຄ້າຂາຍຍົກ ຂອງບັນດາບໍລິສັດນຳເຂົ້າສິນຄ້າ, ບໍລິສັດການຄ້າຂາຍຍົກ ທີ່ຂຶ້ນກັບການຄຸ້ມຄອງຂອງແຂວງ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ 1005/ອຄ.ກຄພນ ລົງວັນທີ 22 ພຶດສະພາ 2015, ວ່າດ້ວຍທຸລະກິດ ການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ;

ເພື່ອເຮັດໃຫ້ການຄຸ້ມຄອງລາຄາສິນຄ້າໄປຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງ ແລະ ດັດສົມຂອງລັດ ເພື່ອຮັບປະກັນຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້;

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ເພື່ອໃຫ້ຄວາມຮ່ວມມື ແລະ ປະຕິບັດ ດັ່ງນີ້:

1. ໂດຍການເຊີນເອົາບໍລິສັດຂາອອກ-ຂາເຂົ້າ, ທຸລະກິດການຄ້າຂາຍຍົກ, ຜູ້ນຳເຂົ້າສິນຄ້າພາຍໃນແຂວງຂອງຕົນ ໃຫ້ເຂົາເຈົ້າສະໜອງຂໍ້ມູນກ່ຽວກັບຕົ້ນທຶນການນຳເຂົ້າສິນຄ້າ ແລະ ສະໜອງໂຄງປະກອບລາຄາສິນຄ້າ (ລາຄາຂາຍຍົກ=ລາຄາສິນຄ້ານຳເຂົ້າ+ພັນທະພາສີ+ອາກອນມູນຄ່າເພີ່ມ+ຄ່າຂົນສົ່ງ+ຄ່າບໍລິການຕ່າງໆ+ກຳໄລ) ທີ່ນຳເຂົ້າມາຈຳໜ່າຍໃຫ້ລູກຄ້າຂອງຕົນ, ພ້ອມທັງແຈ້ງລາຍຊື່, ເບີໂທລະສັບ ແລະ ສະຖານທີ່ຕັ້ງລະອຽດຂອງລູກຄ້າຂາຍຍ່ອຍຂອງບໍລິສັດ ເພື່ອສະດວກໃນການຕິດຕາມກວດກາຂອງເຈົ້າໜ້າທີ່ຢູ່ຕາມຮ້ານຄ້າຂາຍຍ່ອຍທົ່ວໄປ ແລະ ຮ້ານສະດວກຊື້ຕ່າງໆ, ທັງນີ້ກໍເພື່ອເປັນການປົກປ້ອງຜູ້ຊົມໃຊ້ບໍ່ໃຫ້ຖືກເອົາລັດເອົາປຽບທາງດ້ານລາຄາ, ຫຼີກລ້ຽງການກຳນົດລາຄາຂາຍຍ່ອຍຂອງສິນຄ້າສູງຢ່າງບໍ່ສົມເຫດສົມຜົນ, ພ້ອມນັ້ນ ກໍເພື່ອໃຫ້ໜ່ວຍງານຄຸ້ມຄອງລາຄາ, ກຳໄດ້ສ່ວນຕ່າງ ລະຫວ່າງ ຂອດລາຄາຂາຍຍົກ ແລະ ຂາຍຍ່ອຍສິນຄ້າ ນອກຈາກສິນຄ້າທີ່ລັດຄວບຄຸມ ເຊັ່ນ: ເຂົ້າ, ຊີ້ນໝູ, ປານິນ ແລະ ນ້ຳມັນເຊື້ອໄຟ;
2. ໂຄງປະກອບລາຄາສິນຄ້າທີ່ກ່າວມາຂ້າງເທິງນັ້ນ, ແມ່ນໃຫ້ເອົາຕາມສະພາບຕົວຈິງຂອງການເສຍພັນທະຕ່າງໆ ທີ່ເຄີຍປະຕິບັດຜ່ານມາ;
3. ພາຍຫຼັງໄດ້ຮັບຂໍ້ມູນໂຄງປະກອບຕົ້ນທຶນການນຳເຂົ້າ ຫຼື ລາຄາຂາຍຍົກສິນຄ້າຂອງບໍລິສັດຂາອອກ-ຂາເຂົ້າ, ທຸລະກິດການຄ້າຂາຍຍົກ, ຜູ້ນຳເຂົ້າສິນຄ້າ ທີ່ກ່າວໄວ້ໃນຂໍ້ 1 ເທິງນີ້, ກະລຸນາສົ່ງໃຫ້ ກົມການຄ້າພາຍໃນ ຢ່າງຊ້າສຸດບໍ່ໃຫ້ກາຍ ວັນທີ 15 ມີນາ 2017;
4. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ອອກແຈ້ງການ ເພື່ອຊີ້ນຳການກຳນົດລາຄາຂາຍຍ່ອຍສິນຄ້ານຳເຂົ້າມາຈາກຕ່າງປະເທດ ໂດຍກຳນົດລາຄາຂາຍຍ່ອຍມີລາຄາສູງສຸດບໍ່ກາຍ 20% ຂອງຕົ້ນທຶນລາຄາຂາຍຍົກ ທີ່ກຳນົດໃນຂໍ້ 1 ເທິງນີ້;

5. ສໍາລັບລາຄາຂາຍຍົກ-ຂາຍຍ່ອຍ ຜະລິດຕະພັນ ທີ່ຜະລິດຢູ່ ສປປ ລາວ ຈະມີແຈ້ງການແນະນໍາຈາກ ກົມອຸດສາຫະກໍາ ແລະ ຫັດຖະກໍາ ສະເພາະຕ່າງຫາກ;

6. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ບຸນມີ ມະນີວົງ

<u>ບ່ອນນໍາສົ່ງ:</u>

- ກົມສ່ວຍສາອາກອນ, ກະຊວງການເງິນ (ເພື່ອໃຫ້ຄວາມຮ່ວມມື);
- ກົມພາສີ, ກະຊວງການເງິນ (ເພື່ອໃຫ້ຄວາມຮ່ວມມື);
- ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ເພື່ອໃຫ້ຄວາມຮ່ວມມື);
- ສໍາເນົາ